ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------==00==----------

ທະນາຄານແຫ່ງ ສປປ ລາວ ເລກທີ: 1077 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ: 08 DEC 2016

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການຊື້-ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກ ຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການຄຸ້ມຄອງ ແລະ ກົນໄກການເຄື່ອນໄຫວໃນຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ເພື່ອຊຸກຍູ້ໃຫ້ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານເຄື່ອນໄຫວປົກກະຕິ ແລະ ເປັນເຄື່ອງມືດັດສົມດຸ່ນດ່ຽງອັດຕາແລກປ່ຽນ ແນໃສ່ປະກອບສ່ວນຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງຍາວນານ.

### ມາດຕາ 2 ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ

ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນການຈັດຕັ້ງການຊື້-ຂາຍເງິນຕາຕ່າງປະເທດສະກຸນຕ່າງໆຂອງບັນດາທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ໃນລະບົບອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເຊິ່ງທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດບັນດາສະກຸນເງິນທີ່ສາມາດຊື້-ຂາຍ ໃນຕະຫຼາດດັ່ງກ່າວ ແຕ່ລະໄລຍະ.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະການເຄື່ອນໄຫວຊື້-ຂາຍເງິນຕາຕ່າງປະເທດສຳລັບບັນດາທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາທີ່ສ້າງຕັ້ງ ແລະ ດຳເນີນທຸລະກິດຢູ່ໃນ ສປປ ລາວ ຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 4 ສະມາຊິກຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ**

ສະມາຊິກຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ປະກອບດ້ວຍ:

1. ທະນາຄານທຸລະກິດ
2. ຮ້ານແລກປ່ຽນເງິນຕາ
3. ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ

**ມາດຕາ 5 ເງື່ອນໄຂຂອງສະມາຊິກຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ**

ສະມາຊິກຂອງຕະຫຼາດເງິນຕາຕ່າງປະເທດ ລະຫວ່າງທະນາຄານຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງມີບັນຊີເງິນຝາກເປັນເງິນຕາຕ່າງປະເທດ ແລະ ເງິນກີບ ໄວ້ນໍາທະນາຄານແຫ່ງ ສປປ ລາວ. ສໍາລັບຮ້ານແລກປ່ຽນເງິນຕາທີ່ເປັນນິຕິບຸກຄົນທີ່ໄດ້ຮັບອະນຸຍາດສະໝັກເຂົ້າເປັນສະມາຊິກຂອງຕະຫຼາດດັ່ງກ່າວ ກໍ່ຕ້ອງມີບັນຊີເງິນຝາກເປັນເງິນຕາຕ່າງປະເທດ ແລະ ເງິນກີບໄວ້ນໍາທະນາຄານທຸລະກິດໃດໜຶ່ງ;
2. ຊໍາລະສະສາງຜ່ານການໂອນເງິນໃນບັນຊີ;
3. ດໍາເນີນການຊື້-ຂາຍຜ່ານລະບົບໂປຼແກຼມຕະຫຼາດລະຫວ່າງທະນາຄານ;
4. ຕ້ອງມີຫ້ອງການສະເພາະ ແລະ ຕ້ອງມີການປະກອບອຸປະກອນທີ່ຈໍາເປັນໃນການຕິດຕໍ່ພົວພັນ ເປັນຕົ້ນແມ່ນໂທລະສັບ, ໂທລະສານ ແລະ ເຄື່ອງຄອມພິວເຕີທີ່ເຊື່ອມຕໍ່ໂດຍກົງ ຫາບັນດາສະມາຊິກຂອງຕະຫຼາດເງິນຕາຕ່າງປະເທດລະຫ່ວາງທະນາຄານດ້ວຍກັນ ໃນນັ້ນ ໂທລະສັບຕ້ອງບັນທຶກສຽງໄດ້;
5. ຕ້ອງແຕ່ງຕັ້ງພະນັກງານຂອງຕົນຈໍານວນໜຶ່ງ ທີ່ມີຄວາມຮູ້ຄວາມສາມາດຕາງໜ້າທະນາຄານທຸລະກິດ, ຮ້ານແລກປ່ຽນເງິນຕາໃນການເຮັດທຸລະກິດເງິນຕາຕ່າງປະເທດ ເພື່ອຮັບຜິດຊອບວຽກງານຕິດຕໍ່ພົວພັນ ຊື້-ຂາຍເງິນຕາກັບສະມາຊິກຕະຫຼາດຜູ້ອື່ນໆ ແລະ ວຽກງານການຊໍາລະ ແລະ ການບັນຊີ;
6. ການເຂົ້າເປັນສະມາຊິກຂອງຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ແມ່ນບົນພື້ນຖານຄວາມສະໝັກໃຈ ແລະ ຕ້ອງຂຽນຄໍາຮ້ອງເຖິງທະນາຄານແຫ່ງ ສປປ ລາວ, ແລະ ຕ້ອງຈ່າຍຄ່າບໍາລຸງທີ່ເປັນສະມາຊິກຕະຫຼາດ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິໃນແຕ່ລະປີ ຕາມທີ່ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນແຕ່ລະໄລຍະ.

**ມາດຕາ 6 ການເຂົ້າຮ່ວມຂອງທະນາຄານແຫ່ງ ສປປ ລາວ**

ກົມບໍລິການທະນາຄານ ຕາງໜ້າໃຫ້ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມໃນຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ດັ່ງນີ້:

1. ໃນນາມເປັນສະມາຊິກ ແລະ ເປັນຜູ້ຈັດຕັ້ງ, ຄຸ້ມຄອງຕະຫຼາດ;
2. ເຂົ້າດັດສົມຕະຫຼາດທ້າຍມື້ ໂດຍຜ່ານລະບົບການປະມູນຕາມຈໍານວນເງິນຕາຕ່າງປະເທດສຸດທິ ທີ່ບໍ່ສາມາດດໍາເນີນທຸລະກໍາຢູ່ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານໄດ້ ຕາມເງື່ອນໄຂນະໂຍບາຍເງິນຕາ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 7 ການແຕ່ງຕັ້ງຜູ້ຕາງໜ້າຊື້-ຂາຍເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ທີ່ເປັນສະມາຊິກຕະຫຼາດເງິນຕາຕ່າງປະເທດ ຕ້ອງແຕ່ງຕັ້ງຜູ້ຕາງໜ້າຂອງຕົນທີ່ເຮັດວຽກທຸລະກິດເງິນຕາ ເພື່ອຮັບຜິດຊອບວຽກງານລະອຽດ ດັ່ງນີ້:

1. ການພົວພັນຕິດຕໍ່ ຊື້-ຂາຍ ເງິນຕາ;
2. ການຊໍາລະສະສາງ ແລະ ການບັນຊີ.

ລາຍຊື່ຂອງພະນັກງານ ທີ່ຖືກແຕ່ງຕັ້ງຕ້ອງໄດ້ແຈ້ງໃຫ້ສະມາຊິກອື່ນຊາບນໍາຢ່າງເປັນເອກະພາບກັນພາຍໃນ 3 ວັນລັດຖະການ ຫຼັງຈາກໄດ້ຮັບເປັນສະມາຊິກແລ້ວ, ສ່ວນສິດຂອບເຂດໃນການກໍານົດວົງເງິນທີ່ຕິດຕໍ່ຊື້-ຂາຍຕົວຈິງນໍາກັນ ໃຫ້ຄະນະອໍານວຍການຂອງທະນາຄານ ແລະ ຮ້ານແລກປ່ຽນເງິນຕາ ທີ່ເປັນສະມາຊິກເປັນຜູ້ຕົກລົງໄວ້ຢ່າງເປັນລາຍລັກອັກສອນ.

**ມາດຕາ 8 ປະເພດທຸລະກໍາໃນຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ**

ສະມາຊິກຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານສາມາດດໍາເນີນທຸລະກໍາຊື້-ຂາຍເງິນຕາຕ່າງປະເທດ ດັ່ງລຸ່ມນີ້:

1. ຊື້-ຂາຍທັນທີ (Spot)
2. ຊື້-ຂາຍຝາກ (Swaps)
3. ຊື້-ຂາຍຄືນ (Repurchase)
4. ຊື້-ຂາຍລ່ວງໜ້າ (Forward contract)

**ມາດຕາ 9 ການສະເໜີອັດຕາຊື້-ຂາຍ ເງິນຕາຕ່າງປະເທດ**

ສະມາຊິກທີ່ເຂົ້າຮ່ວມການເຄື່ອນໄຫວໃນຕະຫຼາດແຕ່ລະຄັ້ງຕ້ອງສະເໜີອັດຕາຊື້ ແລະ ອັດຕາການຂາຍຄຽງຄູ່ກັນໃນໂປຼແກຼມຊື້-ຂາຍເງິນຕາຕ່າງປະເທດ ເພື່ອບໍ່ໃຫ້ສະມາຊິກອື່ນສາມາດຮູ້ໄດ້ວ່າຕົນເອງຕ້ອງການ ຊື້ ຫຼື ຂາຍ. ອັດຕາຊື້ ແລະ ອັດຕາຂາຍທີ່ສະເໜີ ຕ້ອງຢູ່ໃນກອບອັດຕາແລກປ່ຽນທີ່ທະນາຄານແຫ່ງ ສປປ ລາວ ກໍານົດໄວ້ແຕ່ລະໄລຍະ.

**ມາດຕາ 10 ການກໍານົດວົງເງິນຕໍ່າສຸດ ທີ່ຈະຊື້-ຂາຍໃນຕະຫຼາດເງິນຕາຕ່າງປະເທດ**

ຈໍານວນເງິນຕາຕ່າງປະເທດທີ່ ຊື້-ຂາຍ ນໍາກັນລະຫ່ວາງສະມາຊິກຕະຫຼາດ ຕໍ່າສຸດແມ່ນສິບພັນ (10.000) ໂດລາສະຫະລັດ ຫຼື ທຽບເທົ່າກັບເງິນຕາຕ່າງປະເທດສະກຸນອື່ນ ຊຶ່ງການຊື້-ຂາຍແຕ່ລະຄັ້ງ ຕ້ອງມີເງື່ອນໄຂດັ່ງນີ້:

1. ສະມາຊິກຕະຫຼາດ ຕ້ອງມີເງິນໃນບັນຊີພຽງພໍຕໍ່ການຊໍາລະສະສາງທຸລະກໍາແຕ່ລະຄັ້ງ;
2. ຕ້ອງປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນໄວ້ຢ່າງເຄັ່ງຄັດ ເປັນຕົ້ນແມ່ນ ຈໍານວນເງິນ, ອັດຕາແລກປ່ຽນ, ກອບເວລາໃນການຊໍາລະ ແລະ ອື່ນໆ;
3. ຕ້ອງລາຍງານຂໍ້ມູນທັງໝົດຂອງການດໍາເນີນທຸລະກໍາ ໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບຕາມກໍານົດເວລາ;
4. ຮ້ານແລກປ່ຽນເງິນຕາ ອະນຸຍາດໃຫ້ ຊື້-ຂາຍ ສູງສຸດບໍ່ເກີນທຶນຈົດທະບຽນຂອງຕົນ.

**ມາດຕາ 11 ການຈັບຄູ່ຊື້-ຂາຍເງິນຕາ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຈັບຄູ່ຜູ້ສະເໜີຊື້ ແລະ ຂາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ເມື່ອເຫັນວ່າທັງອັດຕາແລກປ່ຽນ ແລະ ຈຳນວນສອດຄ່ອງກັນ, ພ້ອມທັງແຈ້ງໃຫ້ບັນດາທະນາຄານທຸລະກິດ ຫຼື ຮ້ານແລກປ່ຽນເງິນຕາທີ່ກ່ຽວຂ້ອງຊາບ ເພື່ອດຳເນີນທຸລະກຳຊື້-ຂາຍ. ກໍລະນີອັດຕາແລກປ່ຽນ ແລະ ຈຳນວນເງິນ ບໍ່ກົງກັນຕາມການສະເໜີຂອງສະມາຊິກຕະຫຼາດ, ທະນາຄານແຫ່ງ ສປປ ລາວ ຈະດຳເນີນການຈັບຄູ່ໃຫ້ຜູ້ທີ່ສະເໜີອັດຕາແລກປ່ຽນ ແລະ ຈຳນວນເງິນທີ່ໃກ້ຄຽງທີ່ສຸດ ເພື່ອເຮັດໃຫ້ການດຳເນີນທຸລະກຳສຳເລັດ ດ້ວຍການປະສານກັບສະມາຊິກກ່ຽວຂ້ອງ.

**ມາດຕາ 12 ການດູດຊຶມຕະຫຼາດທ້າຍມື້**

ທະນາຄານແຫ່ງ ສປປ ລາວ ເຂົ້າດູດຊຶມເງິນຕາຕ່າງປະເທດທ້າຍມື້ ດັ່ງນີ້:

1. ການປະມູນເງິນຕາຕ່າງປະເທດ ໂດຍອີງໃສ່ກົນໄກ ດັ່ງນີ້:
   1.1. ຍອດເຫຼືອສຸດທິເງິນຕາຕ່າງປະເທດທີ່ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້ໃນຕະຫຼາດລະຫວ່າງທະນາຄານ;
   1.2. ດຳເນີນການປະມູນຕາມກອບເວລາທີ່ກຳນົດໄວ້ໃນມາດຕາ 14;
   1.3. ຜູ້ເຂົ້າຮ່ວມການປະມູນສະເໜີອັດຕາແລກປ່ຽນຕາມກອບທີ່ກຳນົດໄວ້;
   1.4. ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕ້ອງສະແດງເອກະສານຢັ້ງຢືນການເຂົ້າຊື້-ຂາຍໃນຕະຫຼາດເງິນຕາລະຫວ່າງທະນາຄານ ໃນມື້ນັ້ນທີ່ບໍ່ສາມາດດຳເນີນທຸລະກຳໄດ້.
2. ກົນໄກອື່ນໆ ທີ່ ທະນາຄານແຫ່ງ ສປປ ລາວ ປະກາດໃຊ້ແຕ່ລະໄລຍະ ອີງໃສ່ເງື່ອນໄຂທາງດ້ານນະໂຍບາຍເງິນຕາ.

**ມາດຕາ 13 ເງື່ອນໄຂເຂົ້າຮ່ວມປະມູນເງິນຕາຕ່າງປະເທດທ້າຍມື້**

ສະມາຊິກທີ່ເຂົ້າຮ່ວມການປະມູນເງິນຕາຕ່າງປະເທດທ້າຍມື້ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຜູ້ເຂົ້າຮ່ວມປະມູນ ຕ້ອງມີເອກະສານຄັດຕິດໃນການຊື້-ຂາຍເງິນຕາຕ່າງປະເທດກັບລູກຄ້າ ຕາມທີ່ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ກຳນົດໄວ້; ຮ້ານແລກປ່ຽນເງິນຕາທີ່ສະເໜີເຂົ້າປະມູນຕ້ອງສະໜອງເອກະສານ ທີ່ກ່ຽວຂ້ອງກັບການສະໜອງເງິນຕາຕ່າງປະເທດກັບລູກຄ້າ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຢ່າງຄົບຖ້ວນ;
2. ທະນາຄານທຸລະກິດ ຕ້ອງປະຕິບັດລະບຽບການຮັກສາຖານະເງິນຕາຕ່າງປະເທດສຸດທິຢ່າງເຄັ່ງຄັດ;
3. ການຊໍາລະສະສາງໃຫ້ແກ່ສະມາຊິກທີ່ເປັນຮ້ານແລກປ່ຽນເງິນຕາ ໃຫ້ດຳເນີນຜ່ານບັນຊີທະນາຄານທຸລະກິດທີ່ຮ້ານແລກປ່ຽນເງິນຕາໄດ້ເປີດບັນຊີໄວ້ນຳເທົ່ານັ້ນ.

**ມາດຕາ 14 ການກຳນົດເວລາເປີດ-ປິດຕະຫຼາດ**

ຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ເປີດດຳເນີນທຸລະກຳຕາມກອບໄລຍະເວລາ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ຍົກເວັ້ນວັນພັກ ລັດຖະການ ດັ່ງນີ້:

1. ການດຳເນີນທຸລະກຳຊື້-ຂາຍເງິນຕາຕ່າງປະເທດລະຫວ່າງສະມາຊິກດ້ວຍກັນເອງ:
   - ຕອນເຊົ້າ ແຕ່ ເວລາ 9:00-10:00 ໂມງ;
   - ຕອນບ່າຍ ແຕ່ ເວລາ 13:00-14:00 ໂມງ.

2. ດຳເນີນທຸລະກຳດັດສົມສະພາບຄ່ອງທ້າຍມື້ດ້ວຍຮູບການປະມູນຢູ່ ກົມບໍລິການທະນາຄານ ແຕ່ ເວລາ 14:01-15:00 ໂມງ.

**ມາດຕາ 15 ການຊຳລະສະສາງ**

ຫ້ອງການຊຳລະ ແລະ ບັນຊີແຕ່ລະຝ່າຍ ມີໜ້າທີ່ກວດກາລາຍລະອຽດໃນໃບຢັ້ງຢືນການຕົກລົງຊື້-ຂາຍ ທີ່ຫ້ອງການທຸລະກິດເງິນຕາສົ່ງໃຫ້. ເມື່ອເຫັນວ່າຖືກຕ້ອງຈຶ່ງສ້າງເອກະສານຜ່ານບັນຊີ ເພື່ອຊຳລະເງິນໃຫ້ທັນຕາມກຳນົດເວລາຂອງການຕົກລົງຊື້-ຂາຍ ແລ້ວແຈ້ງໃຫ້ກັນ ແລະ ກັນຊາບເພື່ອຕິດຕາມການຮັບເງິນເຂົ້າໃນບັນຊີຕົວຈິງ.

ການຊຳລະຕາມການຕົກລົງຊື້-ຂາຍທັນທີ (Spot) ແມ່ນຕ້ອງປະຕິບັດໃຫ້ສຳເລັດພາຍໃນມື້ທີ່ຕົກລົງດຳເນີນທຸລະກຳລະຫວ່າງກັນ. ກໍລະນີການຕົກລົງຊື້-ຂາຍລ່ວງໜ້າ (Forward Contract), ຊື້-ຂາຍຄືນ (Repurchase) ແລະ ຊື້-ຂາຍຝາກ (Swaps) ຫ້ອງຊຳລະ ແລະ ບັນຊີຂອງຝ່າຍຊື້ ແລະ ຝ່າຍຂາຍມີໜ້າທີ່ຕາມການຊຳລະຕາມກຳນົດເວລາ ແລະ ອັດຕາແລກປ່ຽນທີ່ສອງຝ່າຍໄດ້ມີສັນຍາຊື້-ຂາຍນຳກັນ. ທຸກປະເພດທຸລະກຳໃນຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານດັ່ງກ່າວຂ້າງເທິງ ຈະມີບັນຊີສະເພາະເພື່ອຕິດຕາມການຊື້-ຂາຍໃນແຕ່ລະວັນ.

**ມາດຕາ 16 ການຕິດຕາມການກວດກາ**

ຄະນະອຳນວຍການຂອງແຕ່ລະທະນາຄານທຸລະກິດ ຫຼື ຮ້ານແລກປ່ຽນເງິນຕາເປັນສະມາຊິກຂອງຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ ມີໜ້າທີ່ກວດກາລາຍການຊື້-ຂາຍຂອງຜູ້ຕາງໜ້າຊື້-ຂາຍເງິນຕາຂອງຕົນເປັນບາງຄັ້ງຄາວ ໂດຍຕິດຕໍ່ຫາຄະນະອຳນວຍການຂອງທະນາຄານທຸລະກິດ ຫຼື ຮ້ານແລກປ່ຽນເງິນຕາ ທີ່ເປັນຄູ່ກໍລະນີຊື້-ຂາຍ ເພື່ອກວດກາການປະຕິບັດລະບຽບຫຼັກການເຄື່ອນໄຫວຂອງຜູ້ຕາງໜ້າຂອງຕົນ.

**ມາດຕາ 17 ໜ້າທີ່ຮັບຜິດຊອບຂອງກົມບໍລິການທະນາຄານ**

ກົມບໍລິການທະນາຄານ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ ດັ່ງນີ້:

1. ຕາງໜ້າໃຫ້ທະນາຄານແຫ່ງ ສປປ ລາວ ໃນການເຂົ້າເປັນສະມາຊິກຂອງຕະຫຼາດລະຫວ່າງທະນາຄານເພື່ອດຳເນີນການຕາມທີ່ກຳນົດໄວ້ໃນມາດຕາ 6 ແລະ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
2. ເຜີຍແຜ່ອັດຕາແລກປ່ຽນລະຫວ່າງທະນາຄານລົງໃນລະບົບຊື້-ຂາຍເງິນຕາຕ່າງປະເທດ ແລະ ເວັບໄຊຂອງທະນາຄານແຫ່ງ ສປປ ລາວ ປະຈຳວັນຢ່າງເປັນປົກກະຕິ.

**ມາດຕາ 18 ໜ້າທີ່ຮັບຜິດຊອບຂອງກົມນະໂຍບາຍເງິນຕາ**

ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ ດັ່ງນີ້:

1. ຕິດຕາມການຊື້-ຂາຍເງິນຕາຕ່າງປະເທດໃນຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານ;
2. ຄຸ້ມຄອງຮ້ານແລກປ່ຽນເງິນຕາໃຫ້ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຄັ່ງຄັດ ພ້ອມທັງປະຕິບັດມາດຕະການຕໍ່ຜູ້ລະເມີດ;
3. ສັງລວມຂໍ້ມູນກ່ຽວກັບ ການຊື້-ຂາຍເງິນຕາ ພ້ອມທັງສະຫຼຸບສັງລວມອັດຕາຊື້-ຂາຍສະເລ່ຍປະຈຳວັນ ເພື່ອແຈ້ງໃຫ້ສະມາຊິກຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານຊາບໃນໜ້າຈໍຄອມພິວເຕີ ແລະ ເວັບໄຊຂອງທະນາຄານແຫ່ງ ສປປ ລາວ ໃນທຸກໆຕອນເຊົ້າກ່ອນເວລາເປີດຕະຫຼາດເພື່ອໃຊ້ເປັນອັດຕາອ້າງອີງໃຫ້

ແກ່ສະມາຊິກຕະຫຼາດໃນການກຳນົດອັດຕາຊື້-ຂາຍທີ່ຕົນປະກາດອອກໃນໜ້າຈໍຄອມພິວເຕີ ແລະ ລາຍງານສະພາບການເຄື່ອນໄຫວຂອງຕະຫຼາດໃຫ້ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ.

**ມາດຕາ 19 ໜ້າທີ່ຮັບຜິດຊອບຂອງກົມຄຸ້ມຄອງທະນາຄານທຸລະກິດ**

ກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ດັ່ງນີ້:

1. ອະນຸຍາດໃຫ້ບັນດາທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຊື້-ຂາຍເງິນຕາຕ່າງປະເທດໃຫ້ເຂົ້າເປັນສະມາຊິກ;
2. ກວດກາ ແລະ ຊຸກຍູ້ທະນາຄານທຸລະກິດປະຕິບັດຂໍ້ຕົກລົງວ່າດ້ວຍການຮັກສາຖານະເງິນຕາຕ່າງປະເທດຢ່າງເຄັ່ງຄັດ ແລະ ເຂົ້າດຳເນີນທຸລະກຳຊື້-ຂາຍເງິນຕາໃນຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານເມື່ອລະດັບຖານະເງິນຕາຕ່າງປະເທດສຸດທິສະກຸນໃດໜຶ່ງຂອງແຕ່ລະທະນາຄານທຸລະກິດເກີນດຸນ ຫຼື ຂາດດຸນ ຕາມລະບຽບກຳນົດອອກໃນແຕ່ລະໄລຍະ;
3. ກວດກາ ແລະ ດຳເນີນມາດຕະການຕໍ່ຜູ້ລະເມີດການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຄັ່ງຄັດ.

**ມາດຕາ 20 ລະບຽບວິໄນຂອງຜູ້ຕາງໜ້າຊື້-ຂາຍ ເງິນຕາຕ່າງປະເທດ**

ຜູ້ຕາງໜ້າຊື້-ຂາຍເງິນຕາຕ່າງປະເທດ ທີ່ປະຈຳການຕ້ອງເຄັ່ງຄັດຕໍ່ລະບຽບວິໄນຄື: ເຂົ້າປະຈຳການເພື່ອດຳເນີນທຸລະກິດຊື້-ຂາຍເງິນຕາໃນຕະຫຼາດ. ບໍ່ຮັບເງິນ ຫຼື ຂອງລາງວັນ ເພື່ອປັ່ນຕະຫຼາດ ເຊັ່ນ:

1. ເຈດຕະນາໃສ່ຈຳນວນເງິນ ແລະ ອັດຕາແລກປ່ຽນໃນຄຳສັ່ງຊື້ ຫຼື ຄຳສັ່ງຂາຍ ແລ້ວບໍ່ຊື້-ຂາຍຕົວຈິງ;
2. ໃສ່ອັດຕາແລກປ່ຽນທີ່ສູງ ຫຼື ຕ່ຳເກີນອອກຈາກກອບທີ່ ທະນາຄານແຫ່ງ ສປປ ລາວ ກຳນົດໄວ້ ຈົນເຮັດໃຫ້ຜູ້ຊື້-ຂາຍ ລາຍອື່ນບໍ່ສາມາດຊື້-ຂາຍນຳຕົນເອງໄດ້.

**ມາດຕາ 21 ຂໍ້ຫ້າມສຳລັບສະມາຊິກ**

ຫ້າມສະມາຊິກຕະຫຼາດເງິນຕາຕ່າງປະເທດລະຫວ່າງທະນາຄານຈັດຕັ້ງປະຕິບັດ ດັ່ງນີ້:

1. ບໍ່ປະຕິບັດພັນທະສັນຍາຊື້-ຂາຍເງິນຕາຕ່າງປະເທດ ເຊັ່ນ: ບໍ່ຊຳລະສະສາງຕາມຈຳນວນເງິນ ແລະ ກຳນົດເວລາທີ່ກຳນົດໄວ້ໃນສັນຍາ;
2. ປັບອັດຕາແລກປ່ຽນຂຶ້ນ ຫຼື ລົງ ໂດຍບໍ່ມີການຊື້-ຂາຍຕົວຈິງ;
3. ສ້າງທຸລະກຳເທິງ ລະບົບໂດຍທີ່ຕົນເອງບໍ່ມີເຈດຕະນາຊື້-ຂາຍຕົວຈິງ;
4. ຍົກເລີກທຸລະກຳທີ່ໄດ້ຮັບການຢັ້ງຢືນຈາກລະບົບວ່າຈັບຄູ່ແລ້ວ;
5. ບໍ່ລາຍງານສະພາບການດຳເນີນທຸລະກຳໃນຕະຫຼາດລະຫວ່າງທະນາຄານ ໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ຊາບ ຫຼື ລາຍງານຂໍ້ມູນບໍ່ຄົບຖ້ວນ ເຊັ່ນ: ລາຍງານຈຳນວນທຸລະກຳ ຫຼື ຈຳນວນເງິນໃນການດຳເນີນທຸລະກຳບໍ່ຄົບຖ້ວນ ແລະ ອື່ນໆ;
6. ບັນຫາອື່ນໆ ທີ່ ທະນາຄານແຫ່ງ ສປປ ລາວ ພິຈາລະນາແລ້ວເຫັນວ່າ ເປັນພຶດຕິກຳທີ່ສ້າງຄວາມປັ່ນປ່ວນຕໍ່ຕະຫຼາດລະຫວ່າງທະນາຄານ;
7. ຫ້າມສະມາຊິກ ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຊື້-ຂາຍໂດຍກົງ ໂດຍບໍ່ຜ່ານຕະຫຼາດລະຫວ່າງທະນາຄານ.

**ມາດຕາ 22 ມາດຕະການປະຕິບັດຕໍ່ຜູ້ລະເມີດ**

ຜູ້ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກດຳເນີນມາດຕະການ ດັ່ງລຸ່ມນີ້:

- ຖ້າຫາກພົບວ່າຜູ້ດຳເນີນທຸລະກຳກະທຳຜິດກໍລະນີໃດໜຶ່ງໃນ ມາດຕາ 20 ລະບຽບວິໄນຂອງຜູ້ຕາງໜ້າຊື້-ຂາຍ ເງິນຕາຕ່າງປະເທດ ເກີນ 2 ຄັ້ງ ໂດຍ ທະນາຄານແຫ່ງ ສປປ ລາວ ສືບຮູ້ ແລະ ມີຫຼັກຖານຢັ້ງຢືນວ່າເປັນການເຈດຕະນາ ທະນາຄານແຫ່ງ ສປປ ລາວ ຈະແຈ້ງໃຫ້ຜູ້ອຳນວຍການ ຫຼື ການຈັດຕັ້ງຂອງຜູ້ຊື້-ຂາຍຮັບຊາບ ແລະ ຖ້າມີການກະທຳຜິດຄັ້ງທີ 3 ຈະຖືກພິຈາລະນາຍົກເລີກການເປັນສະມາຊິກ. ການຍົກເລີກການເປັນສະມາຊິກດັ່ງກ່າວ ຈະຖືກແຈ້ງໃຫ້ສະມາຊິກອື່ນຮັບຮູ້ນຳພາຍໃນ 3 ວັນລັດຖະການນັບແຕ່ມື້ຖືກຍົກເລີກຢ່າງເປັນລາຍລັກອັກສອນ;
- ສະເພາະການກະທຳຜິດໂດຍ ເຈດຕະນາໃສ່ຈຳນວນເງິນ ແລະ ອັດຕາແລກປ່ຽນໃນຄຳສັ່ງຊື້ ຫຼື ຄຳສັ່ງຂາຍ ແລ້ວບໍ່ຊື້-ຂາຍຕົວຈິງ, ນອກຈາກຈະແຈ້ງພຶດຕິກຳ ໃຫ້ຜູ້ອຳນວຍການ ຫຼື ການຈັດຕັ້ງຂອງຜູ້ຊື້-ຂາຍຮັບຊາບ ແລ້ວ ສະມາຊິກຜູ້ກະທຳຜິດຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ ຕໍ່ຄັ້ງ ຈົນກວ່າສະມາຊິກດັ່ງກ່າວຈະຢຸດຕິການລະເມີດ;
- ສະມາຊິກດຳເນີນການຊື້-ຂາຍໂດຍບໍ່ຜ່ານລະບົບ ພ້ອມທັງບໍ່ລາຍງານການຊື້-ຂາຍ ດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ຜູ້ລະເມີດຈະຖືກປະຕິບັດມາດຕະການປັບໃໝແຕ່ 1.000.000 ກີບ ຫາ 10.000.000 ກີບ ຕໍ່ຄັ້ງ ຈົນກວ່າສະມາຊິກດັ່ງກ່າວຈະຢຸດຕິການລະ ເມີດ.

ສະມາຊິກທີ່ປະຕິບັດລະເມີດຂໍ້ຫ້າມຕາມທີ່ກຳນົດໄວ້ໃນມາດຕາ 21 ຈະຖືກປະຕິບັດມາດຕະການ ດັ່ງນີ້:

- ກ່າວເຕືອນຢ່າງເປັນລາຍລັກອັກສອນ;
- ປັບໃໝຕາມຂໍ້ຕົກລົງເພີ່ມເຕີມວ່າດ້ວຍມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ ສະບັບເລກທີ 847/ທຫລ ລົງວັນທີ 30 ກັນຍາ 2013 ຫຼື ຕາມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
- ປ່ຽນຜູ້ຕາງໜ້າຮັບຜິດຊອບຊື້-ຂາຍເງິນຕາຕ່າງປະເທດ;
- ໂຈະການເປັນສະມາຊິກ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນລະບຽບການສະບັບເລກທີ 374/ ທຫລ, ລົງວັນທີ 30/11/1999.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ ສົມພາວ ໄຟສິດ